# ບົດປະເມີນຜົນກະທົບຂອງຮ່າງນິຕິກຳ (IA NOTE)

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ

### 1.1 ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ/ອົງການ: ກະຊວງປ້ອງກັນປະເທດ
ຊື່ກົມ/ພະແນກ: ກົມກົດໝາຍ ພະແນກນິຕິກຳ
ຊື່ ແລະ ຕຳແໜ່ງຂອງພະນັກງານທີ່ຮັບຜິດຊອບ: ພັທ. ພົນສະໄໝ ວິໄລ
ເບີໂທລະສັບ: 02099809866 02055922262
ອີເມລ: tingvieng_2@hotmail.com chansathid.tlbu@gmail.com

### 1.2 ຊື່ນິຕິກຳ

ຊື່ຮ່າງນິຕິກຳ: ດຳລັດວ່າດ້ວຍກຳລັງສຳຮອງປ້ອງກັນຊາດ

ຮ່າງນິຕິກຳແມ່ນສະບັບ: ☑ ໃໝ່ ☐ ປັບປຸງ

### 1.3 ກຳນົດເວລາ

ກຳນົດເວລາໃນການສ້າງດຳລັດວ່າດ້ວຍກຳລັງສຳຮອງປ້ອງກັນຊາດຮອງປ້ອງກັນຊາດ ນັບແຕ່ເລີ່ມສ້າງຈົນສຳເລັດ.

- ແຕ່ງຕັ້ງຄະນະຮັບຜິດຊອບສ້າງດຳລັດກຳລັງສຳຮອງປ້ອງກັນຊາດ ໃນວັນທີ 17 ເດືອນ ສິງຫາ 2018;
- ຄະນະຮັບຜິດຊອບສ້າງດຳລັດເປີດກອງປະຊຸມປຶກສາຫາລື, ແບ່ງຄວາມຮັບຜິດຊອບ, ວາງທິດທາງ ແລະ ແຜນການເຄື່ອນໄຫວໃນການສ້າງຮ່າງດຳລັດກຳລັງສຳຮອງປ້ອງກັນຊາດ ໃນວັນທີ 18 ຕຸລາ 2018;
- ເປີດກອງປະຊຸມຄົບຄະນະຮັບຜິດຊອບສ້າງດຳລັດ ເພື່ອໃຫ້ແຕ່ລະອະນຸກຳມະການລາຍງານຄວາມຄືບໜ້າການເຄື່ອນໄຫວວຽກງານຂອງຕົນ ໃນເດືອນ ພະຈິກ 2018;
- ກວດກາຄືນທາງດ້ານເນື້ອໃນຮ່າງດຳລັດ, ບັນດາເອກະສານຕ່າງໆຂອງແຕ່ລະອະນຸກຳມະການ ແລະ ຂໍທິດຊີ້ນຳຫົວໜ້າຄະນະຮັບຜິດຊອບຊີ້ນຳລວມສ້າງດຳລັດກຳລັງສຳຮອງ ໃນເດືອນ ທັນວາ 2018;
- ສົ່ງໂຄງຮ່າງ ແລະ ເນື້ອໃນເບື້ອງຕົ້ນ ໃຫ້ກະຊວງຍຸຕິທຳ ເພື່ອປະກອບຄຳເຫັນ ແລະ ກວດກາຄວາມຖືກຕ້ອງຂອງຮ່າງນິຕິກຳ ໃນເດືອນ ມັງກອນ 2019;
- ສືບຕໍ່ໃນຂັ້ນຕອນປຶກສາຫາລື ທາງເນື້ອໃນຮ່າງດຳລັດກຳລັງສຳຮອງປ້ອງກັນຊາດ ລະຫວ່າງເດືອນ ກຸມພາ ເຖິງ ເດືອນ ມິຖຸນາ 2019;
- ສຳເລັດການສ້າງຮ່າງດຳລັດ, ບົດປະເມີນຜົນກະທົບຂອງຮ່າງດຳລັດ ແລະ ບົດສະເໜີກ່ຽວກັບຮ່າງດຳລັດກຳລັງສຳຮອງປ້ອງກັນຊາດ ເບື້ອງຕົ້ນ ໃນເດືອນ ກໍລະກົດ 2019;
- ລົງທາບທາມຄຳເຫັນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນເດືອນ ກໍລະກົດ ເຖິງ ເດືອນ ພະຈິກ 2019;
- ສະເໜີໃຫ້ກະຊວງຍຸຕິທຳລົງໃນຈົດຫມາຍເຫດທາງລັດຖະການເພື່ອທາບທາມຄຳເຫັນທົ່ວໄປ ໃນເດືອນ ທັນວາ 2019.
- ສະເໜີລາຍງານຮ່າງນິຕິກຳຕໍ່ຄະນະປະຈຳພັກກະຊວງປ້ອງກັນປະເທດ ຕົ້ນເດືອນ ມັງກອນ 2020;
- ທາບທາມຄຳເຫັນ 60 ວັນ ຜ່ານເວັບໄຊ Laoofficialgazett ໃນເດືອນ ມັງກອນ 2020;

- ສະເໜີເອົາຮ່າງນິຕິກຳເຂົ້າຜ່ານຄະນະນຳກະຊວງຍຸຕິທຳ ພິຈາລະນາ ໃນເດືອນ ມັງກອນ 2020;
- ເປີດກອງປະຊຸມປັບປຸງ, ຮຽບຮຽງຂັ້ນສຸດທ້າຍ ໃນກາງເດືອນ ກຸມພາ 2020;
- ສະເໜີເຂົ້າພິຈາລະນາໃນກອງປະຊຸມລັດຖະບານ ໃນຕົ້ນເດືອນ ກຸມພາ 2020 ແລະ ລາຍງານກ່ຽວກັບ ການສ້າງຮ່າງດຳລັດວ່າດ້ວຍກຳລັງສຳຮອງປ້ອງກັນຊາດ ທີ່ຢູ່ໃນຄວາມຮັບຜິດຊອບຂອງກະຊວງປ້ອງກັນປະເທດ ເພື່ອໃຫ້ລັດຖະບານ ແລະ ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງ.

## 2. ບັນຫາ ແລະ ຈຸດປະສົງ

### 2.1 ບັນຫາ

ການຈັດຕັ້ງປະຕິບັດວຽກງານ ການກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງຢູ່ ສປປ ລາວ ໃນໄລຍະ 20 ກວ່າປີຜ່ານມາ ແມ່ນໄດ້ນຳໃຊ້ບັນດາຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງຂອງກະຊວງປ້ອງກັນປະເທດເປັນບ່ອນອີງໃນການຊີ້ນຳ ແລະ ຊຸກຍູ້ກົມກອງທ້ອງຖິ່ນ, ອຳນາດການປົກຄອງເຂົ້າຮ່ວມ ແລະ ໃຫ້ການສະໜັບສະໜູນຕໍ່ວຽກງານການກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງປ້ອງກັນຊາດ ເຮັດໃຫ້ວຽກງານດັ່ງກ່າວໄດ້ກາຍເປັນ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງທົ່ວປວງຊົນ, ສ້າງສະຕິຄວາມຮັບຮູ້ ແລະ ການຕື່ນຕົວຂອງຄົນລາວທັງຊາດໄດ້ດີພໍສົມຄວນ. ເນື່ອງຈາກວ່າວຽກງານ ກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງນີ້ ແມ່ນມີລັກສະນະກ້ວາງຂວາງ, ນຳໃຊ້ໃນທົ່ວປວງຊົນ ຊຶ່ງໃນໄລຍະຜ່ານມາ ກົມກຳລັງພົນ ກົມໃຫຍ່ເສນາທິການກອງທັບ ແມ່ນພົບບັນຫາຫຍຸ້ງຍາກຫຼາຍປະການ ໃນການຈັດຕັ້ງປະຕິບັດກ່ຽວກັບວຽກງານກຳລັງພົນສຳຮອງ ເນື່ອງຈາກຍັງບໍ່ມີນິຕິກຳທີ່ກຳນົດຈະແຈ້ງກ່ຽວກັບກຳລັງສຳຮອງປ້ອງກັນຊາດ, ມີແຕ່ກົດໝາຍວ່າດ້ວຍພັນທະປ້ອງກັນຊາດສະບັບປັບປຸງ ເລກທີ 25/ສພຊ, ລົງວັນທີ 13 ທັນວາ 2012 ເທົ່ານັ້ນ ທີ່ໄດ້ກຳນົດໃນ ພາກທີ II ໝວດທີ 4 ມາດຕາ 30-36 ກ່ຽວກັບກຳລັງສຳຮອງ ແຕ່ກໍຍັງມີລັກສະນະເປີດກ້ວາງ, ດັ່ງນັ້ນ ຈຶ່ງມີຄວາມຈຳເປັນທີ່ສຸດຕ້ອງສ້າງດຳລັດວ່າດ້ວຍກຳລັງສຳຮອງປ້ອງກັນຊາດສະບັບນີ້ ເພື່ອກຳນົດໃຫ້ຈະແຈ້ງ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດຕົວຈິງ.

### 2.2 ຈຸດປະສົງ

ການສ້າງດຳລັດກຳລັງສຳຮອງປ້ອງກັນຊາດ ມີຈຸດປະສົງດັ່ງນີ້:

- ເພື່ອກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການກໍ່ສ້າງ ແລະ ປຸກລະດົມກຳລັງໄວ້ຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ, ຮັບປະກັນໃຫ້ແກ່ການຕອບສະໜອງກຳລັງສຳຮອງໃຫ້ກຳລັງປະຈຳການຂອງກອງທັບ ເມື່ອມີຄວາມຮຽກຮ້ອງຕ້ອງການ;
- ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວ,ຈັດຕັ້ງປະຕິບັດວຽກງານກຳລັງສຳຮອງປ້ອງກັນຊາດ;
- ເພື່ອຄວາມຮັບຮູ້ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ;
- ຜັນຂະຫຍາຍນິຕິກຳໃຕ້ກົດໝາຍຕາມການຊີ້ນຳຂອງສະພາແຫ່ງຊາດ.

## 3. ການຄົ້ນຄວ້າ ແລະ ທາງເລືອກທີ່ໄດ້ພິຈາລະນາ

### 3.1 ທາງເລືອກທີ 1: ຮັກສາຕາມສະພາບການໃນປັດຈຸບັນ

ຖ້າ ສປປ ລາວ ຮັກສາຕາມສະພາບປັດຈຸບັນ ອີງການຈັດຕັ້ງປະຕິບັດ ໂດຍສະເພາະແມ່ນກະຊວງປ້ອງກັນປະເທດ ຈະພົບຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ, ເຮັດໃຫ້ວຽກງານການກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ໃນເວລາມີຄວາມຈຳເປັນ ຫຼື ມີພາວະສຸກເສີນ.

ຜົນດີ.

- ບໍ່ສູນເສັຍເວລາ ລວມທັງງົບປະມານຂອງລັດທີ່ໃຊ້ຈ່າຍເຂົ້າໃນການສ້າງນິຕິກຳ

ຜົນເສຍ.

- ມີຄວາມຫຍຸ້ງຍາກໃນການເຄື່ອນໄຫວວຽກງານ, ບໍ່ມີນິຕິກຳ ເປັນບ່ອນອີງ ແລະ ບໍ່ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ.
- ເຮັດໃຫ້ການຈັດຕັ້ງລະດົມກຳລັງສຳຮອງບໍ່ໄດ້ຕາມເປົ້າໝາຍທີ່ວາງໄວ້.
- ບໍ່ສາມາດເຕົ້າໂຮມກຳລັງແຮງສັງລວມທາງດ້ານວຽກງານປ້ອງກັນຊາດໃຫ້ໄດ້ດີເທົ່າທີ່ຄວນ.

### 3.2 ທາງເລືອກທີ 2: ວິທີການແກ້ໄຂທີ່ບໍ່ແມ່ນການສ້າງດຳລັດກຳລັງສຳຮອງປ້ອງກັນຊາດ

ໃນໄລຍະຜ່ານມາ ອົງການຮັບຜິດຊອບວຽກງານກຳລັງສຳຮອງແມ່ນໄດ້ເອົາໃຈໃສ່ສ້າງເງື່ອນໄຂຕ່າງໆ ເພື່ອປະຕິບັດກົດໝາຍທີ່ມີຢູ່ໃນປັດຈຸບັນຢ່າງເຂັ້ມງວດ ດ້ວຍການສຶກສາອົບຮົມປະຊາຊົນໃຫ້ມີສະຕິເຄື່ອນຕົວ, ເຄົາລົບ ແລະ ປະຕິບັດກົດໝາຍ, ພ້ອມໂຄສະນາເຜີຍແຜ່ລະບຽບກົດໝາຍ ໂດຍສະເພາະແມ່ນກົດໝາຍວ່າດ້ວຍພັນທະປ້ອງກັນຊາດ, ກົດໝາຍວ່າດ້ວຍການປ້ອງກັນຊາດ, ນິຕິກຳ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງກັບວຽກງານກຳລັງສຳຮອງ ເພື່ອໃຫ້ການຈັດຕັ້ງ ແລະ ປະຊາຊົນ ຮັບຮູ້ ເຂົ້າໃຈຢ່າງທົ່ວເຖິງ; ພ້ອມກັນນີ້ ກໍຕອບສະໜອງວັດຖຸ ແລະ ງົບປະມານ ນຳໃຊ້ເຂົ້າໃນວຽກງານກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງໄດ້ດີພໍສົມຄວນ, ແຕ່ຍັງບໍ່ສາມາດເຄື່ອນໄຫວວຽກງານໄດ້ຢ່າງເຕັມສ່ວນ ແລະ ມີປະສິດທິພາບເທົ່າທີ່ຄວນ ເນື່ອງຈາກບໍ່ມີນິຕິກຳສະເພາະກ່ຽວກັບວຽກງານກຳລັງສຳຮອງ ທີ່ຈະແຈ້ງ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ຜົນດີ.

- ບໍ່ເສັຍເວລາ ລວມທັງງົບປະມານທີ່ໃຊ້ຈ່າຍເຂົ້າໃນການສ້າງນິຕິກຳ;

ຜົນເສຍ.

- ບໍ່ມີນິຕິກຳຄຸ້ມຄອງ ຈະເຮັດໃຫ້ອົງການຈັດຕັ້ງປະຕິບັດ(ກະຊວງປ້ອງກັນປະເທດ)ໃນນາມເປັນຜູ້ຄຸ້ມຄອງ ບໍ່ມີບ່ອນອີງອັນໜັກແໜ້ນໃນການປະຕິບັດໜ້າທີ່ວຽກງານ ຫຼື ການຄຸ້ມຄອງວຽກງານກຳລັງສຳຮອງ;
- ເປັນການເພີ່ມພາລະໃຫ້ອົງການຈັດຕັ້ງປະຕິບັດ ໃນການໂຄສະນາເຜີຍແຜ່, ສຶກສາອົບຮົມພົນລະເມືອງ, ກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງ ພົບຄວາມຫຍຸ້ງຍາກ.

### 3.3 ທາງເລືອກທີ 3: ການສ້າງ ຫຼື ປັບປຸງນິຕິກຳ

ການສ້າງດຳລັດກຳລັງສຳຮອງປ້ອງກັນຊາດ ກໍເພື່ອກຳນົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບການກໍ່ສ້າງ ແລະ ປຸກລະດົມກຳລັງໄວ້ຢ່າງກວ້າງຂວາງ ໃນຂອບເຂດທົ່ວປະເທດ, ຮັບປະກັນໃຫ້ແກ່ການຕອບສະໜອງກຳລັງສຳຮອງໃຫ້ກຳລັງປະຈຳການຂອງກອງທັບ ເມື່ອມີຄວາມຮຽກຮ້ອງຕ້ອງການ; ເປັນບ່ອນອີງໃຫ້ແກ່ການເຄື່ອນໄຫວ,ຈັດຕັ້ງປະຕິບັດວຽກງານກຳລັງສຳຮອງປ້ອງກັນຊາດ; ເພື່ອຄວາມຮັບຮູ້ ແລະ ເປັນເອກະພາບໃນການຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດ.

ຜົນດີ.

- ສາມາດສ້າງດຳລັດກຳລັງສຳຮອງປ້ອງກັນຊາດ ໃຫ້ມີຄວາມລະອຽດ, ຈະແຈ້ງ, ຄົບຖ້ວນ ພ້ອມທັງສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ, ເຮັດສຳເລັດໜ້າທີ່;
- ການນຳໃຊ້ດຳລັດ ຂອງອົງການການຈັດຕັ້ງປະຕິບັດມີລະບຽບແບບແຜນ, ມີບ່ອນອີງໃນການເຄື່ອນໄຫວວຽກງານ, ມີຄວາມສະດວກ ແລະ ເປັນເອກະພາບ;

- ເຮັດໃຫ້ແຕ່ລະພາກສ່ວນທີ່ຮັບຜິດຊອບ ຮັບຮູ້ ແລະ ເຂົ້າໃຈເຖິງພາລະບົດບາດຂອງຕົນ;
- ເຮັດໃຫ້ວຽກງານກໍ່ສ້າງ, ປຸກລະດົມ ກໍາລັງສໍາຮອງ ມີປະສິດທິຜົນ.
- ປະຊາຊົນມີຄວາມຮັບຮູ້ ແລະ ມີສະຕິຕື່ນຕົວສະໝັກໃຈເຂົ້າຮັບໃຊ້ກອງທັບໃນເມື່ອມີຄວາມ ຮຽກຮ້ອງຕ້ອງການ.

ຜົນເສຍ.

- ລັດຖະບານຕ້ອງໄດ້ໃຊ້ງົບປະມານຈໍານວນໜຶ່ງ ເຂົ້າໃນການເຄື່ອນໄຫວສ້າງດໍາລັດກໍາລັງສໍາຮອງປ້ອງກັນຊາດ.

## 3.4 ການເລືອກເອົາວິທີການສ້າງ ຫຼື ປັບປຸງນິຕິກໍາ

### 3.4.1 ເຫດຜົນໃນການເລືອກເອົາວິທີການດັ່ງກ່າວ

ເພື່ອຕອບສະໜອງສະພາບການເຕີບໃຫຍ່ຂະຫຍາຍຕົວທາງດ້ານເສດຖະກິດ, ວັດທະນະທໍາ-ສັງຄົມຂອງປະເທດ, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ກໍຄືຕອບສະໜອງຕໍ່ຄວາມຮຽກຮ້ອງຕ້ອງການຂອງວຽກງານປ້ອງກັນຊາດໃນໄລຍະໃໝ່ ຈຶ່ງຮຽກຮ້ອງໃຫ້ມີນິຕິກໍາກ່ຽວກັບກໍາລັງສໍາຮອງປ້ອງກັນຊາດ ເພື່ອກໍານົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການ ທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບການກໍ່ສ້າງ ແລະ ປຸກລະດົມກໍາລັງສໍາຮອງໄວ້ຢ່າງກ້ວາງຂວາງໃນຂອບເຂດທົ່ວປະເທດ;

ເພື່ອເພີ່ມທະວີ ການຄຸ້ມຄອງຂອງລັດດ້ວຍກົດໝາຍ ຍົກສູງຄວາມຮັບຜິດຊອບ ຂອງອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ ແລະ ພົນລະເມືອງລາວທຸກຄົນໃນການກໍ່ສ້າງ ແລະ ປຸກລະດົມກໍາລັງສໍາຮອງ; ເປັນບ່ອນອີງໃຫ້ແກ່ອົງການຈັດຕັ້ງ ແລະ ພາກສ່ວນທີ່ເຮັດໜ້າທີ່ກໍ່ສ້າງ, ຄຸ້ມຄອງ, ກວດກາ, ນໍາໃຊ້ກໍາລັງສໍາຮອງຢູ່ສູນກາງ ແລະ ທ້ອງຖິ່ນ ໄດ້ຈັດຕັ້ງປະຕິບັດຢ່າງຖືກຕ້ອງເປັນຮູບປະທໍາຢ່າງແທ້ຈິງ;

ເພື່ອປຸກລະດົມກໍາລັງສໍາຮອງໃຫ້ແກ່ກໍາລັງປະຈໍາການໃນກອງທັບເມື່ອມີຄວາມຕ້ອງການ ຫຼື ມີພາວະສຸກເສີນ; ເຮັດໃຫ້ພົນລະເມືອງລາວມີສະຕິຕື່ນຕົວສູງ, ມີນໍ້າໃຈຮັກຊາດ, ເສຍສະຫຼະ, ອົງອາດກ້າຫານ ກຽມພ້ອມອຸທິດຕົນເຂົ້າຮັບໃຊ້ຊາດໃນເວລາປະເທດຊາດຮຽກຮ້ອງຕ້ອງການ.

ດ້ວຍເຫດນີ້ ການສ້າງດໍາລັດວ່າດ້ວຍກໍາລັງສໍາຮອງປ້ອງກັນຊາດ ຖືເປັນວິທີທີ່ດີທີ່ສຸດ ໃນການແກ້ໄຂບັນຫາທີ່ເກີດຂຶ້ນ ຖ້າທຽບໃສ່ທາງເລືອກອື່ນ ທີ່ກ່າວມານັ້ນ ເນື່ອງຈາກວ່າ ການສ້າງດໍາລັດກໍາລັງສໍາຮອງປ້ອງກັນຊາດໃນຄັ້ງນີ້ ຈະສາມາດແກ້ໄຂບັນຫາກ່ຽວກັບການກໍ່ສ້າງ, ປຸກລະດົມ, ຄຸ້ມຄອງ, ກວດກາ ແລະ ນໍາໃຊ້ກໍາລັງສໍາຮອງ ເຂົ້າໃນວຽກງານປ້ອງກັນຊາດໃຫ້ມີປະສິດທິພາບ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຊາດໃນເມື່ອມີຄວາມຈໍາເປັນ ຫຼື ພາວະສຸກເສີນ.

ຍ້ອນເຫດຜົນນີ້ ກະຊວງປ້ອງກັນປະເທດ ກໍຄືຄະນະຮັບຜິດຊອບ ຈຶ່ງເລືອກເອົາການສ້າງດໍາລັດກໍາລັງສໍາຮອງປ້ອງກັນຊາດ ເປັນວິທີແກ້ໄຂບັນຫາ.

ນິຕິກໍາທີ່ຈະສ້າງ ຫຼື ປັບປຸງ ນອນຢູ່ໃນປະເພດນິຕິກໍາທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກໍາບໍ່?
☑ ແມ່ນ ☐ ບໍ່ແມ່ນ

### 3.4.2 ການປັບປຸງຮ່າງນິຕິກໍາ

ບໍ່ແມ່ນການປັບປຸງຮ່າງນິຕິກໍາ ເປັນນິຕິກໍາສ້າງໃໝ່.

### 3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ

ນິຕິກໍາທີ່ສະເໜີສ້າງ ຫຼື ປັບປຸງ ຈະຈໍາກັດການແຂ່ງຂັນທາງທຸລະກິດໃນ ສປປ ລາວ ຫຼື ບໍ່?

☐ ຈໍາກັດ ☑ ບໍ່ຈໍາກັດ

### 3.4.4 ພັນທະຕໍ່ສາກົນ

ຮ່າງນິຕິກໍາ ຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນ ຫຼືບໍ່? ☑ ແມ່ນ ☐ ບໍ່ແມ່ນ

ຖ້າແມ່ນ, ແມ່ນພັນທະອັນໃດ:

☐ WTO ☐ AEC ☐ FTA ☑ ອື່ນໆ (ກໍານົດແຈ້ງ)

ຖ້າແມ່ນ, ຮ່າງນິຕິກໍາທີ່ສະເໜີສ້າງຫຼືປັບປຸງມີຄວາມສອດຄ່ອງກັບພັນທະສາກົນນັ້ນຫຼືບໍ່?

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

1. ສົນທິສັນຍາກ່ຽວກັບສິດທິມະນຸດ ແລະ ກົດໝາຍມະນຸດສະທໍາສາກົນ.

### 3.4.5 ນິຕິກໍາ ທີ່ພົວພັນ

ນິຕິກໍາທີ່ພົວພັນກັບດໍາລັດວ່າດ້ວຍກໍາລັງສໍາຮອງປ້ອງກັນຊາດປະກອບມີດັ່ງນີ້:

1. ກົດໝາຍວ່າດ້ວຍພັນທະປ້ອງກັນຊາດ;
2. ກົດໝາຍວ່າດ້ວຍການປ້ອງກັນຊາດ.

ຮ່າງດໍາລັດກໍາລັງສໍາຮອງປ້ອງກັນຊາດ ມີຄວາມສອດຄ່ອງກັບນິຕິກໍາທີ່ກ່ຽວຂ້ອງ

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

# 4. ຄາດຄະເນຜົນກະທົບ ແລະ ການທາບທາມຄໍາເຫັນ

## 4.1 ສັງຄົມ

### 4.1.1 ຜົນກະທົບ

ຜົນກະທົບທາງບວກ.

- ມີນິຕິກໍາເປັນບ່ອນອີງໃຫ້ແກ່ວຽກງານກໍາລັງສໍາຮອງປ້ອງກັນຊາດ, ຮັບປະກັນໃນການຄຸ້ມຄອງລັດ-ສັງຄົມດ້ວຍກົດໝາຍ;
- ເຮັດໃຫ້ວຽກງານກໍາລັງສໍາຮອງປ້ອງກັນຊາດ ຖືກເຊື່ອມຊຶມເຂົ້າໃນທົ່ວສັງຄົມ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເປັນເອກະພາບ;
- ປະເທດຊາດ ມີຄວາມໝັ້ນຄົງ ແລະ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ;
- ນອກຈາກນີ້ກໍມີ ຜົນກະທົບທີ່ດີຕໍ່ສັງຄົມທີ່ອາດຈະເກີດຂຶ້ນ ເພາະເຮັດໃຫ້ກໍາລັງປ້ອງກັນຊາດຂອງປະເທດເຮົາເຂັ້ມແຂງຂຶ້ນ, ສາມາດປຸກລະດົມ ນໍາໃຊ້ກໍາລັງແຮງສັງລວມຂອງຊາດ, ປະຊາຊົນເປັນຈິດໜຶ່ງໃຈດຽວ ແລະ ເຮັດໃຫ້ກໍາລັງປໍລະປັກ ກໍຄືສັດຕູຜູ້ບໍ່ຫວັງດີ ເຫັນໄດ້ເຖິງຄວາມພ້ອມ ແລະ ເຂັ້ມແຂງຂອງປະເທດເຮົາ.

ຜົນກະທົບທາງລົບ.

- ປະຊາຊົນຕ້ອງມີພັນທະ ກຽມພ້ອມປະກອບສ່ວນກໍາລັງແຮງ ແລະ ວັດຖຸປັດໃຈ ເຂົ້າໃນວຽກງານກໍາລັງສໍາຮອງປ້ອງກັນຊາດເມື່ອມີຄວາມຈໍາເປັນ;

- ກຸ່ມຄົນທີ່ບັນຈຸເຂົ້າຢູ່ໃນກຳລັງສຳຮອງປ້ອງກັນຊາດປະເພດໜຶ່ງ, ປະເພດສອງ ຕ້ອງຖືກລະດົມເຂົ້າຮັບໃຊ້ກອງທັບໃນຍາມສົງຄາມ ຫຼື ມີພາວະສຸກເສີນ.

### 4.1.2 ເງື່ອນໄຂໃນການປະຕິບັດນິຕິກຳ

ໃນການປະຕິບັດດຳລັດກຳລັງສຳຮອງປ້ອງກັນຊາດສະບັບນີ້ ໄດ້ກຳນົດເງື່ອນໄຂກ່ຽວກັບກຳລັງສຳຮອງປ້ອງກັນຊາດ, ການກໍ່ສ້າງ ປຸກລະດົມ ຄຸ້ມຄອງ ກວດກາ ແລະ ນຳໃຊ້ ກຳລັງສຳຮອງປ້ອງກັນຊາດ, ເຄື່ອງແບບ ແລະ ງົບປະມານທີ່ໃນການຈັດສ້າງດຳລັດ ການຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ດຳລັດດັ່ງກ່າວໃຫ້ທຸກພາກສ່ວນຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດນິຕິກຳ:

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ

ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

### 4.1.3 ການທາບທາມຄຳເຫັນ

ການສ້າງດຳລັດກຳລັງສຳຮອງປ້ອງກັນຊາດໃນຄັ້ງນີ້ ຄະນະຮັບຜິດຊອບໄດ້ທາບທາມຄຳເຫັນຢ່າງກວ້າງຂວາງເພື່ອລະດົມຄວາມຄິດເຫັນໃສ່ຮ່າງດຳລັດຈາກພາກສ່ວນຕ່າງໆຢູ່ກຳລັງຫຼວງ ແລະ ກຳລັງທ້ອງຖິ່ນໃນຂົງເຂດປ້ອງກັນຊາດ ໃນຂອບເຂດທົ່ວປະເທດ. ນອກຈາກນີ້ ກໍເປີດກວ້າງທາບທາມຄຳເຫັນຜ່ານເວັບໄຊຈົດໝາຍເຫດທາງລັດຖະການ, ທາບທາມປະກອບຄຳເຫັນໃສ່ຮ່າງດຳລັດນຳບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ.

ການທາບທາມຄຳເຫັນຖືວ່າໄດ້ຮັບຄຳເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດໃຫ້ແກ່ຄະນະຮັບຜິດຊອບໃນການພິຈາລະນາຄົ້ນຄວ້າ ເນື້ອໃນຮ່າງດຳລັດກຳລັງສຳຮອງປ້ອງກັນຊາດນີ້ ເພື່ອໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງແກ່ວຽກງານປ້ອງກັນຊາດ.

### 4.1.4 ສະຫຼຸບ

| **ຕົວຊີ້ວັດຜົນກະທົບ** | **ບໍ່ມີ** | **ໜ້ອຍ** | **ຫຼາຍ** |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☐ | ☑ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 800.000 ກີບຕໍ່ບຸກຄົນ)* | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດຳລົງຊີວິດຂອງບຸກຄົນ)* | ☑ | ☐ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼືປັບປຸງ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

### 4.2 ພາກທຸລະກິດ

#### 4.2.1 ຜົນກະທົບ

ການສ້າງດຳລັດວ່າດ້ວຍກຳລັງສຳຮອງປ້ອງກັນຊາດນີ້ ຈະບໍ່ສົ່ງຜົນກະທົບຕໍ່ການດຳເນີນທຸລະກິດ.

ຜົນກະທົບທາງບວກ.

- ຖືກປົກປ້ອງກິດຈະການຂອງຕົນ ເມື່ອເກີດມີສົງຄາມ.
- ພາກສ່ວນທຸລະກິດທີ່ຜະລິດ ອຸປະກອນ ພາຫານະເຕັກນິກ ຮັບໃຊ້ກຳລັງສຳຮອງປ້ອງກັນຊາດ ແມ່ນຈະໄດ້ຮັບຜົນດີ.

ຜົນກະທົບທາງລົບ.

- ບໍ່ມີ

#### 4.2.2 ເງື່ອນໄຂໃນການປະຕິບັດນິຕິກຳ

ຫົວໜ່ວຍທຸລະກິດອາດຈະໄດ້ຮັບຜົນກະທົບ ໃນກໍລະນີຮີບດ່ວນ, ຈຳເປັນຕ້ອງນຳໃຊ້ວັດຖຸ, ອຸປະກອນ, ພາຫະນະເຕັກນິກຕ່າງໆຂອງພາກເອກະຊົນ.

ຄາດຄະເນຄ່າສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດນິຕິກຳ:

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ

ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

#### 4.2.3 ການທາບທາມຄຳເຫັນ

ບໍ່ມີ

#### 4.2.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂະແໜງອຸດສາຫະກຳທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກຳສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ)* | ☑ | ☐ | ☐ |
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວ ທີ່ຖືກຜົນກະທົບ)* | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ)<br>*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ)* | ☑ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ)* | ☑ | ☐ | ☐ |
| ການບໍ່ເຫັນດີ ຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>*(ຂໍ້ແນະນຳ- ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

## 4.3 ລັດຖະບານ

### 4.3.1 ຜົນກະທົບ

ພາຍຫຼັງດຳລັດກຳລັງສຳຮອງປ້ອງກັນຊາດນີ້ ຖືກຮັບຮອງ ແລະ ປະກາດໃຊ້ ຈະກາຍເປັນເຄື່ອງມືທີ່ສຳຄັນໃຫ້ແກ່ລັດຖະບານ ໂດຍສະເພາະແມ່ນບັນດາອົງການຈັດຕັ້ງປະຕິບັດທີ່ເຮັດໜ້າທີ່ໃນການກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງ ໃຫ້ຮັບຮູ້ພາລະບົດບາດ, ສິດ ແລະ ໜ້າທີ່ຂອງະຕົນໃນການເຄື່ອນໄຫວວຽກງານກຳລັງສຳຮອງປ້ອງກັນຊາດ. ເປັນພື້ນຖານອັນສຳຄັນໃນການສ້າງລັດ ສປປ ລາວ ໃຫ້ກາຍເປັນລັດທີ່ປົກຄອງດ້ວຍກົດໝາຍເທື່ອລະກ້າວ. ນອກຈາກນີ້ ລັດຖະບານຕ້ອງໄດ້ນຳໃຊ້ງົບປະມານຈຳນວນໜຶ່ງ ເຂົ້າໃນການສ້າງ, ໂຄສະນາເຜີຍແຜ່ ໃຫ້ພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະ ເຂົ້າໃຈ ດຳລັດກຳລັງສຳຮອງປ້ອງກັນຊາດຢ່າງກ້ວາງຂວາງ ແລະ ທົ່ວເຖິງ ເພື່ອໃຫ້ການຈັດຕັ້ງປະຕິບັດດຳລັດກຳລັງສຳຮອງປ້ອງກັນຊາດດັ່ງກ່າວ ໄດ້ຮັບຜົນດີ.

ຜົນກະທົບທາງບວກ.

- ເປັນບ່ອນອີງທີ່ສຳຄັນໃຫ້ແກ່ອົງການ, ການຈັດຕັ້ງ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ໃນການຈັດຕັ້ງ ແລະ ເຄື່ອນໄຫວວຽກງານກຳລັງສຳຮອງປ້ອງກັນຊາດ;
- ອົງການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງ ມີຄວາມເຂົ້າໃຈ ແລະ ເປັນເອກະພາບ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວມີປະສິດທິຜົນສູງຂຶ້ນ;
- ເຮັດໃຫ້ວຽກງານການກໍ່ສ້າງ ແລະ ປຸກລະດົມກຳລັງສຳຮອງ ຕອບສະໜອງຄວາມຮຽກຮ້ອງຕ້ອງການໃຫ້ກຳລັງປະຈຳການໄດ້ຕາມຄາດໝາຍ;
- ຍົກຖານະບົດບາດ ແລະ ຄວາມເຊື່ອໝັ້ນຂອງປະເທດເຮົາຕໍ່ພາກພື້ນ ແລະ ສາກົນ.

ຜົນກະທົບທາງລົບ.

- ນຳໃຊ້ງົບປະມານຂອງລັດ ໃນການສ້າງ ແລະ ໂຄສະນາເຜີຍແຜ່ດຳລັດກຳລັງສຳຮອງປ້ອງກັນຊາດ ໃຫ້ຮັບຮູ້ ແລະ ທົ່ວເຖິງ.

### 4.3.2 ເງື່ອນໄຂໃນການຈັດຕັ້ງປະຕິບັດນິຕິກຳ

ເພື່ອສ້າງເງື່ອນໄຂໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ແລະ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດດຳລັດກຳລັງສຳຮອງປ້ອງກັນຊາດນີ້ໃຫ້ໄດ້ຮັບຜົນດີ ລັດຖະບານຄວນມີງົບປະມານເຂົ້າໃນການຈັດຝຶກອົບຮົມ, ໂຄສະນາເຜີຍແຜ່ໃຫ້ອົງການຈັດຕັ້ງປະຕິບັດທີ່ກ່ຽວຂ້ອງ ໄດ້ຮັບຮູ້ ແລະ ເຂົ້າໃຈເປັນເອກະພາບກັນ ຈຶ່ງຈະເຮັດໃຫ້ດຳລັດກຳລັງສຳຮອງປ້ອງກັນຊາດຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນສູງ.

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ

ຄ່າໃຊ້ຈ່າຍ ຕໍ່ປີ: ບໍ່ມີ

### 4.3.3 ການທາບທາມຄຳເຫັນ

ການສ້າງດຳລັດກຳລັງສຳຮອງປ້ອງກັນຊາດສະບັບນີ້ ນອກຈາກຈະມີຜູ້ຕາງໜ້າຈາກກົມໃຫ່ຍເສນາທິການກອງທັບ, ກົມໃຫ່ຍການເມືອງກອງທັບ, ຫ້ອງວ່າການກະຊວງປ້ອງກັນປະເທດ, ກົມກຳລັງພົນກົມໃຫ່ຍເສນາທິການກອງທັບ ແລະ ກົມກົດໝາຍກະຊວງປ້ອງກັນເທດ ເຂົ້າຮ່ວມໃນຄະນະສ້າງຮ່າງດຳລັດກຳລັງສຳຮອງປ້ອງກັນຊາດແລ້ວ, ຄະນະດັ່ງກ່າວ ຍັງໄດ້ນຳຮ່າງດຳລັດດັ່ງກ່າວ ໄປທາບທາມຄຳເຫັນນຳບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງເຊັ່ນ: ກະຊວງປ້ອງກັນຄວາມສະຫງົບ, ກະຊວງສຶກສາແລະກິລາ, ກະຊວງພາຍໃນ, ກະຊວງການເງິນ, ກົມກົດໝາຍກະຊວງຍຸຕິທຳ, ກົມກົດໝາຍສຳນັກ

ງານນາຍົກລັດຖະມົນຕີ, ກຳມະທິການປ້ອງກັນຊາດປ້ອງກັນຄວາມສະຫງົບ ແລະ ອົງການຈັດຕັ້ງມະຫາຊົນ. ນອກຈາກນີ້ຍັງໄດ້ລົງທາບທາມ ຈັດກອງປະຊຸມເປີດກ້ວາງລະດົມຄວາມຄິດເຫັນໃສ່ຮ່າງດຳລັດກຳລັງສຳຮອງປ້ອງກັນຊາດ ຢູ່ຂັ້ນກຳລັງຫຼວງ ແລະ ກຳລັງທ້ອງຖິ່ນໃນຂອບເຂດທົ່ວປະເທດເຊັ່ນ: ບັນດາກົມໃຫຍ່, ຫ້ອງວ່າການ, ບັນດາກອງພົນ, ກອງບັນຊາການທະຫານແຂວງ, ກຳມະທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນແຂວງ ແລະ ຂັ້ນເມືອງ, 4 ອົງການຍຸຕິທຳກອງທັບປະຊາຊົນລາວ.

ການທາບທາມຄຳເຫັນຈາກອົງການຈັດຕັ້ງຂອງລັດ ແລະ ແຕ່ລະພາກສ່ວນທີ່ກ່ຽວຂ້ອງ ຖືວ່າໄດ້ຮັບຄຳເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດໃກ້ແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄວ້າ ປັບປຸງເນື້ອໃນຂອງຮ່າງດຳລັດກຳລັງສຳຮອງປ້ອງກັນຊາດໃນແຕ່ລະໄລຍະຕາມຄວາມເໝາະສົມ ຊຶ່ງຄຳເຫັນທີ່ໄດ້ຮັບ ແມ່ນເປັນຄຳເຫັນທີ່ດີ ແລະ ເປັນປະໂຫຍດກ່ຽວກັບການສ້າງດຳລັດດັ່ງກ່າວໃຫ້ສຳເລັດ.

#### 4.3.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ (ຂັ້ນສູນກາງ, ແຂວງ, ເມືອງ ແລະ ບ້ານ) *(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ)* | ☐ | ☑ | ☐ |
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ *(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການ ຢູ່ຂັ້ນແຂວງ)* | ☐ | ☑ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ (ສະເລ່ຍ) *(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກວ່າ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ)* | ☐ | ☑ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດຖະບານ ທີ່ມີຢູ່ໃນປັດຈຸບັນ *(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍ ຕໍ່ການປະຕິບັດວຽກງານ ຂອງລັດຖະບານ)* | ☑ | ☐ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ*(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດແມ່ນມີໜ້ອຍ ຫຼື ບໍ່ມີເລີຍ)* | ☑ | ☐ | ☐ |

## 5. ການຈັດຕັ້ງປະຕິບັດ

### 5.1 ການສະໜັບສະໜູນ ແກ່ບຸກຄົນ

ເມື່ອປະເທດຊາດມີຄວາມຮຽກຮ້ອງຕ້ອງການກຳລັງສຳຮອງປ້ອງກັນຊາດ ພົນລະເມືອງລາວທຸກຄົນຕ້ອງໃຫ້ການຮ່ວມມືປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ ແລະ ລັດຖະບານຕ້ອງໃຫ້ການຊ່ວຍເຫຼືອແກ່ບຸກຄົນ ເພື່ອເອື້ອອຳນວຍ ແລະ ສ້າງເງື່ອນໄຂໃນການປະຕິບັດດຳລັດກຳລັງສຳຮອງປ້ອງກັນຊາດນີ້. ພ້ອມກັນນີ້ກໍຕ້ອງຝຶກອົບຮົມໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ໂຄສະນາເຜີຍແຜ່ໃຫ້ປະຊາຊົນໄດ້ຮັບຮູ້ໂດຍຜ່ານໂທລະພາບ, ວິທະຍຸ, ໜັງສືພິມ ຫຼື ວິທີການທີ່ເໝາະສົມ.

### 5.2 ການສະໜັບສະໜູນແກ່ພາກທຸລະກິດ

ບໍ່ມີ

### 5.3 ແຜນການຈັດຕັ້ງປະຕິບັດ

ພາຍຫຼັງທີ່ດຳລັດກຳລັງສຳຮອງປ້ອງກັນຊາດ ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ພາກສ່ວນທີ່ມີໜ້າທີ່ໃນການຈັດຕັ້ງປະຕິບັດດຳລັດກຳລັງສຳຮອງປ້ອງກັນຊາດເຊັ່ນ: ກະຊວງປ້ອງກັນປະເທດ, ບັນດາກອງບັນຊາການ

ທະຫານແຂວງ, ບັນດາກອງບັນຊາການທະຫານເມືອງ ຕ້ອງໄດ້ເອົາໃຈໃສ່ໃນການໂຄສະນາເຜີຍແຜ່ດຳລັດກຳລັງສຳຮອງປ້ອງກັນຊາດໃຫ້ພາກສ່ວນຕ່າງໆທີ່ກ່ຽວຂ້ອງຮັບຮູ້ ແລະ ເຂົ້າໃຈໃຫ້ເປັນເອກະພາບກັນ ໃນການປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງລະຫວ່າງອົງການປະຕິບັດດຳລັດດ້ວຍກັນ ແລະ ເພື່ອສ້າງເງື່ອນໄຂໃຫ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ; ແລະ ໂຄສະນາເຜີຍແຜ່ໃຫ້ປະຊາຊົນລາວຮັບຮູ້ ແລະ ເຂົ້າໃຈ.

ຢ່າງໃດກໍຕາມ ການສ້າງດຳລັດກຳລັງສຳຮອງປ້ອງກັນຊາດໃນຄັ້ງນີ້ ໄດ້ກຳນົດອົງການຈັດຕັ້ງປະຕິບັດແຕ່ສູນກາງລົງຮອດທ້ອງຖິ່ນ ເຊິ່ງເປັນເງື່ອນໄຂທີ່ໃນການປະຕິບັດໃຫ້ມີຄວາມເປັນເອກະພາບກັນ. ນອກຈາກນີ້ ດຳລັດດັ່ງກ່າວ ເປັນດຳລັດທີ່ສ້າງໃໝ່ ຊຶ່ງຕ້ອງໃຊ້ເວລາພໍສົມຄວນໃນການໂຄສະນາເຜີຍແຜ່ໃຫ້ສັງຄົມກໍຄືປະຊາຊົນບັນດາເຜົ່າໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ.

### 5.4 ງົບປະມານ ແລະ ແຫຼ່ງທຶນ

ງົບປະມານທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງດຳລັດກຳລັງສຳຮອງປ້ອງກັນຊາດສະບັບນີ້ແມ່ນ:

- ງົບປະມານຂອງລັດຖະບານ;
- ງົບປະມານຂອງກະຊວງປ້ອງກັນປະເທດ;
- ງົບປະມານຂອງອົງການປົກຄອງທ້ອງຖິ່ນ;
- ງົບປະມານຂອງບັນດາກະຊວງຕ່າງໆ;
- ງົບປະມານຈາກແຫຼ່ງອື່ນ ຕາມການອະນຸມັດຂອງລັດຖະບານ.

### 3.1 ທົບທວນຄືນ

ພາຍຫຼັງທີ່ດຳລັດວ່າດ້ວຍກຳລັງສຳຮອງປ້ອງກັນຊາດສະບັບນີ້ ມີຜົນສັກສິດແລ້ວ ໃນທຸກໜຶ່ງປີ ຂະແໜງການຍຸຕິທຳຕ້ອງເປັນໃຈກາງປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເປັນຕົ້ນ ກະຊວງປ້ອງກັນປະເທດ, ກອງບັນຊາການທະຫານແຂວງ, ກອງບັນຊາການທະຫານເມືອງ, ພະແນກກຳລັງສຳຮອງປ້ອງກັນຊາດ ທົບທວນຄືນຜົນການຈັດຕັ້ງປະຕິບັດດຳລັດວ່າດ້ວຍກຳລັງສຳຮອງປ້ອງກັນຊາດສະບັບນີ້ ເພື່ອເປັນຂໍ້ມູນໃນການປັບປຸງດຳລັດດັ່ງກ່າວ ກໍຄືວຽກງານກຳລັງສຳຮອງປ້ອງກັນຊາດໃນແຕ່ລະໄລຍະໃຫ້ສອດຄ່ອງກັບສະພາບຕົວຈິງ.

## ການອະນຸມັດ

ໄດ້ເຮັດອັນໃດໃນລຸ່ມນີ້

1. ☑ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນຕອນເບື້ອງຕົ້ນ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາ ເພື່ອກວດກາຄືນ ແລະ ໃຫ້ຄຳແນະນຳ ຫຼື

2. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ (ຂັ້ນສຸດທ້າຍ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາມີຄຳເຫັນຕໍ່ບົດປະເມີນຜົນ

ກະຊວງປ້ອງກັນປະເທດ (stamp)

ກັນທອງ ສຸກເລືອງຄຳ ............................ 30 ກັນຍາ 2019

ຫົວໜ້າຄະນະຮັບຜິດຊອບຮ່າງນິຕິກຳ ວັນທີ